# Law on Investment Promotion

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 4
## Types of investment
## ປະເພດກິດຈະການການລົງທຶນ

### 1. ປະເພດກິດຈະການ ການລົງທຶນ (Types of investment)

ໃນກົດໝາຍສົ່ງເສີມການລົງທຶນປີ 2016 ໄດ້ກຳນົດປະເພດກິດຈະການ ການລົງທຶນອອກເປັນ 2 ປະເພດຄື: ກິດຈະການ ການລົງທຶນທົ່ວໄປ ແລະ ກິດຈະການ ການລົງທຶນສຳປະທານ ແຕ່ໃນກົດໝາຍສົ່ງເສີມການລົງທຶນປີ 2009 ກຳນົດມີ 3 ປະເພດຄືພວກເຮົາຍັງມີກິດຈະການ ການລົງທຶນໃນເຂດເສດຖະກິດພິເສດ-ເຂດເສດຖະກິດ ສະເພາະທີ່ນອນໃນກິດຈະການລົງທຶນສຳປະທານ.

ການລົງທຶນທົ່ວໄປແມ່ນໃຫ້ພົວພັນນຳຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອແຈ້ງຂຶ້ນທະບຽນວິສາຫະກິດຕາມທີ່ກຳນົດໄວ້ໃນກົດໝາຍວິສາຫະກິດ.

ການລົງທຶນໂດຍຜ່ານການສຳປະທານແມ່ນພົວພັນນຳຂະແໜງແຜນການ ແລະ ການລົງທຶນ.

ການລົງທຶນໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະແມ່ນໃຫ້ພົວພັນນຳຄະນະກຳມະການແຫ່ງຊາດເພື່ອຄຸ້ມຄອງເຂດດັ່ງກ່າວ.

ກິດຈະການສຳປະທານ ແມ່ນກິດຈະການທີ່ໄດ້ຮັບອະນຸຍາດຈາກລັດໃຫ້ນຳໃຊ້ສິດໃນກຳມະສິດ ແລະ ສິດ ອື່ນໆຂອງລັດຕາມລະບຽບເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງເປັນຕົ້ນ: ສິດສຳປະທານທີ່ດິນ, ແຮ່ທາດ, ພະລັງງານໄຟຟ້າ, ກິດຈະການທີ່ເປັນຍຸດທະສາດ: ສາຍການບິນໂທລະຄົມມະນາຄົມ, ປະກັນໄພ, ສະຖາບັນການເງິນຂະແໜງແຜນການ ແລະ ການລົງທຶນ ເປັນຜູ້ພິຈາລະນາກິດຈະການສຳປະທານພາຍໃຕ້ກົດຫມາຍສົ່ງເສີມການລົງທຶນ; ຂັ້ນຕອນການພິຈາລະນາກິດຈະການສຳປະທານ ແມ່ນຂຶ້ນກັບປະເພດກິດຈະການທີ່ມີໃນບັນຊີຮຽກການລົງທຶນ ຫຼື ບໍ່ມີໃນບັນຊີດັ່ງກ່າວ, ຜູ້ສະເຫນີຂໍສຳປະທານຕ້ອງມີຖານະເປັນນິຕິບຸກຄົນເທົ່ານັ້ນ, ໃບທະບຽນສຳປະທານ ລວມເອົາການອະນຸຍາດລົງທຶນ, ນະໂຍບາຍສົ່ງເສີມ, ເລກລະຫັດວິສາຫະກິດ ແລະ ເລກປະຈຳຕົວຜູ້ເສຍອາກອນ.

ກິດຈະການທົ່ວໄປ ແມ່ນກິດຈະການລົງທຶນໃນຂະແໜງທຸລະກິດທົ່ວໄປ ລວມທັງກິດຈະການທີ່ນອນໃນບັນຊີຄວບຄຸມ (Nagative List) ແລະ ນອກບັນຊີຄວບຄຸມ (Non Nagative List) ແຕ່ກິດຈະການເຫລົ່ານັ້ນ ບໍ່ແມ່ນກິດຈະການສຳປະທານ, ຂະແໜງອຸດສາຫະກຳ ແລະ ການຄ້າເປັນຜູ້ພິຈາລະນາອອກໃບທະບຽນວິສາຫະກິດຕາມຂັ້ນຕອນທີ່ກຳນົດໃນກົດຫມາຍວ່າດ້ວຍວິສາຫະກິດ, ກິດຈະການລົງທຶນທີ່ບໍ່ນອນໃນບັນຊີຄວບຄຸມ ສາມາດອອກໃບທະບຽນວິສາຫະກິດພາຍໃນ 10 ວັນລັດຖະການ, ກິດຈະການລົງທຶນທີ່ນອນໃນບັນຊີຄວບຄຸມ ສາມາດອອກໃບທະບຽນວິສາຫະກິດພາຍໃນ 13 ວັນລັດຖະການ, ໃບທະບຽນວິສາຫະກິດລວມເອົາການອະນຸຍາດລົງທຶນ, ນະໂຍບາຍສົ່ງເສີມ ແລະ ເລກປະຈຳຕົວຜູ້ເສຍອາກອນ.

ລັດຖະບານເປັນຜູ້ກຳນົດ ແລະ ຮັບຮອງການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແລະ ການສະເໜີຂໍລົງທຶນຕ້ອງນອນໃນເປົ້າໝາຍ, ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ປະກອບມີ: ເຂດອຸດສາຫະກຳ, ເຂດຜະລິດເພື່ອສົ່ງອອກ, ເຂດທ່ອງທ່ຽວ, ເຂດການຄ້າ / ເຂດການຄ້າຊາຍແດນ, ເຂດປອດພາສີ, ເຂດພັດທະນາ IT, ການຂໍອະນຸຍາດລົງທຶນໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນມີ 2 ລັກສະນະຄື: (1): ຜູ້ພັດທະນາເຂດ: ສາມາດຂໍອະນຸຍາດລົງທຶນກັບຫ້ອງການກອງເລຂາ, ຄະນະກຳມະການແຫ່ງຊາດ ລາວ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ "ຄຂພສ", ຊຶ່ງຕ້ອງປະກອບເອກະສານມີຄື: ແຜນແມ່ບົດ (Master Plan) ສຳລັບຈຸດປະສົງພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ , ບົດລາຍງານການວິເຄາະທາງດ້ານເສດຖະກິດ-ເຕັກນິກ, ບົດລາຍງານຜົນກະທົບສິ່ງແວດລ້ອມ, ຮ່າງຂອງຂໍ້ຕົກລົງສັນຍາ, ສະຖານະທາງດ້ານການເງິນ; (2). ຜູ້ລົງທຶນໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ : ເປັນການລົງທຶນໃສ່ໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ມີຢູ່ແລ້ວ, ຜູ້ລົງທຶນສາມາດຂໍອະນຸຍາດລົງທຶນກັບຜູ້ບໍລິຫານ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ຕົນຕ້ອງການເຂົ້າໄປລົງທຶນໃນເຂດນັ້ນໆ ໄດ້ເລີຍ.

ອາຍຸການລົງທຶນ: ການລົງທຶນໃນກິດຈະການທົ່ວໄປ ບໍ່ຈຳກັດອາຍຸການລົງທຶນ ເວັ້ນເສຍແຕ່ກິດຈະການລົງທຶນທີ່ໄດ້ກຳນົດອາຍຸການລົງທຶນ ໄວ້ໃນລະບຽບກົດໝາຍສະເພາະຂອງຂະແໜງການທີ່ກ່ຽວຂ້ອງ, ອາຍຸການລົງທຶນໃນກິດຈະການສຳປະທານ ແມ່ນອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂຂອງກິດຈະການສຳປະທານຕາມລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງແຕ່ສູງສຸດບໍ່ໃຫ້ເກີນ 50 ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ຫຼື ການປົກຄອງຂອງແຂວງ ເປັນຕົ້ນ ໃນກໍລະນີທີ່ຜູ້ລົງທຶນໄດ້ປະຕິບັດໂຄງການທີ່ນຳເອົາຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ,ໄດ້ປະຕິບັດສັນຍາຢ່າງມີປະສິດທິຜົນ ແລະ ມີຜົນງານໃນການປະກອບສ່ວນພັດທະນາທ້ອງຖິ່ນ ແລະ ອາຍຸການລົງທຶນໃນກິດຈະການພັດທະນາເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ ແມ່ນອີງຕາມປະເພດ, ຂະໜາດ, ເງື່ອນໄຂ ແຕ່ລະເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ ຊຶ່ງສູງສຸດບໍ່ໃຫ້ເກີນ 50 ປີ ແລະ ສາມາດຕໍ່ໄດ້ ແລ້ວແຕ່ກໍລະນີ ທີ່ຜູ້ລົງທຶນໄດ້ປະຕິບັດໂຄງການທີ່ນຳເອົາຜົນປະໂຫຍດສູງສູງໃຫ້ແກ່ປະເທດຊາດ, ໄດ້ປະຕິບັດສັນຍາຢ່າງມີປະສິດທິຜົນ ແລະ ມີຜົນງານໃນການປະກອບ ສ່ວນພັດທະນາທ້ອງຖິ່ນ.

2. **ກິດຈະການ ການລົງທຶນທົ່ວໄປ** (General activity )

ຜູ້ລົງທຶນ ທີ່ມີຈຸດປະສົງ ລົງທຶນໃນກິດຈະການທົ່ວໄປ ກຳນົດຢູ່ໃນບັນຊີ ປະເພດທຸລະກິດຄວບຄຸມ ແລະ ບໍ່ຢູ່ໃນບັນຊີປະເພດທຸລະກິດຄວບຄຸມ[1] ທີ່ບໍ່ຕິດພັນກັບກິດຈະການສຳປະທານ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າ ດ້ວຍ ການສົ່ງເສີມການລົງທຶນສາມາດຍື່ນຄຳຮ້ອງຕໍ່ຫ້ອງການບໍລິການ ການລົງທຶນປະຕູດຽວ ຂະແໜງອຸດສາຫະກຳ ແລະ ການຄ້າ ຂັ້ນສູນກາງ ແລະ ທ້ອງຖິ່ນ.

ກິດຈະການທົ່ວໄປແມ່ນກິດຈະການລົງທຶນໃນຂະແໜງການທຸລະກິດທົ່ວໄປລວມທັງກິດຈະການທີ່ນອນໃນບັນຊີປະເພດທຸລະກິດຄວບຄຸມ (Negative list) ແລະ ກິດຈະການເຫຼົ່ານັ້ນບໍ່ແມ່ນກິດຈະການສຳປະທານ.

[1] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີIII , ໝວດທີ 2, ມາດຕາ 34,35

ບຸກຄົນ ຫຼື ນິຕິບຸກຄົນໃດທີ່ມີຄວາມສົນໃຈຈະລົງທຶນໃນກິດຈະການທົ່ວໄປຕ້ອງຍື່ນຄຳຮ້ອງສະເໜີຜ່ານການບໍລິການ ການລົງທຶນປະຕູດຽວ ຂອງກະຊວງອຸດສາຫະກຳ ແລະ ການຄ້າເພື່ອຂຶ້ນທະບຽນວິສາຫະກິດ ຕາມທີ່ໄດ້ກຳ ນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

- **ການພິຈາລະນາອະນຸມັດ**

ການພິຈາລະນາອະນຸມັດກິດຈະການລົງທຶນທົ່ວໄປຈະມີຂັ້ນຕອນລາຍລະອຽດດັ່ງນີ້:

ຂັ້ນຕອນ ແລະ ກຳນົດເວລາໃນການພິຈາລະນາຂຶ້ນທະບຽນວິສາຫະກິດກ່ຽວກັບການລົງທຶນໃນກິດຈະການ ທົ່ວໄປທີ່ບໍ່ແມ່ນປະເພດທຸລະກິດຄວບຄຸມໃຫ້ອອກທະບຽນວິສາຫະກິດຢ່າງຊ້າບໍ່ໃຫ້ເກີນ 10 ວັນ (ວັນລັດຖະການ) ນັບແຕ່ມື້ໄດ້ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ສຳລັບປະເພດທຸລະກິດຄວບຄຸມນັ້ນ ໃຫ້ອອກໃບທະບຽນວິສາຫະກິດຢ່າງຊ້າບໍ່ໃຫ້ເກີນ 30 ວັນ ວັນລັດຖະການ ນັບແຕ່ມື້ໄດ້ຮັບຄຳຮ້ອງຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ.

ໃນກໍລະນີ ເຫັນວ່າປະເພດທຸລະກິດ ທີ່ຂຶ້ນທະບຽນນັ້ນ ຫາກຢູ່ໃນບັນຊີປະເພດທຸລະກິດຄວບຄຸມແລ້ວ ກະ ຊວງການຄ້າຕ້ອງສົ່ງໃຫ້ກະຊວງການທີ່ກ່ຽວຂ້ອງທັນໃດກະຊວງການດັ່ງກ່າວຕ້ອງພິຈາລະນາ ແລະ ຕອບຢ່າງຊ້າບໍ່ໃຫ້ເກີນ 10 ວັນ (ລັດຖະການ) ເວັ້ນເສຍແຕ່ບາງປະເພດທຸລະກິດທີ່ມີຄວາມຈຳເປັນ ຕ້ອງກວດສອບທາງດ້ານ ເຕັກນິກ ຫຼື ວິຊາການທີ່ຕ້ອງໃຊ້ເວລາຍາວນານກວ່ານັ້ນຫຼັງຈາກນັ້ນກະຊວງການຄ້າຕ້ອງພິຈາລະນາກ່ຽວກັບການ ອອກໃບທະບຽນວິສາຫະກິດໃຫ້ຢ່າງຊ້າບໍ່ໃຫ້ເກີນ 30 ວັນ (ລັດຖະການ).

ຖ້າອອກໃບທະບຽນວິສາຫະກິດນັ້ນກໍຕ້ອງຕອບເປັນລາຍລັກອັກສອນພ້ອມທັງອະທິບາຍເຫດຜົນໃຫ້ຜູ້ຍື່ນຄຳຮ້ອງຂໍຂຶ້ນທະບຽນນັ້ນຊາບ.

ສຳລັບ ການສະເໜີຂະຫຍາຍກິດຈະການຂອງຜູ້ລົງທຶນທີ່ມີວິສາຫະກິດແລ້ວ ການປະກອບເອກະສານແມ່ນ ໃຫ້ປະກອບແຕ່ລະອັນທີ່ຈຳເປັນ, ຕາມທີ່ກຳນົດໄວ້ໃນລະບຽບສະເພາະ ແລະ ການພິຈາລະນາກໍອາດຈະວ່ອງໄວກວ່າການຂໍລົງທຶນໃໝ່.

- **ການກຳນົດເວລາຂອງການລົງທຶນ**

ກຳນົດເວລາຂອງການລົງທຶນໝາຍເຖິງອາຍຸການຂອງການລົງທຶນ ຂອງຜູ້ຂໍອະນຸຍາດລົງທຶນການລົງທຶນໃນກິດຈະການທົ່ວໄປບໍ່ໄດ້ຈຳກັດອາຍຸການລົງທຶນ ເວັ້ນເສຍແຕ່ບາງກິດຈະການທີ່ກົດໝາຍ ໄດ້ກຳນົດອາຍຸການເອົາໄວ້ເປັນ ອັນສະເພາະເທົ່ານັ້ນ.

3. **ກິດຈະການ ການລົງທຶນສຳປະທານ** ( Concession activity )

ກິດຈະການສຳປະທານ ແມ່ນກິດຈະການທີ່ໄດ້ຮັບອະນຸຍາດຈາກລັດໃຫ້ນຳໃຊ້ສິດໃນກຳມະສິດ ແລະ ສິດ ອື່ນໆຂອງລັດຕາມລະບຽບເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງເປັນຕົ້ນ: ສິດສຳປະທານທີ່ດິນ, ແຮ່ທາດ, ພະລັງງານໄຟຟ້າ, ກິດຈະການທີ່ເປັນຍຸດທະສາດ: ສາຍການບິນໂທລະຄົມມະນາຄົມ, ປະກັນໄພ, ສະຖາບັນການເງິນ ກະຊວງແຜນການ ແລະ ການລົງທຶນເປັນຜູ້ພິຈາລະນາກິດຈະການສຳປະທານພາຍໃຕ້ກົດຫມາຍສົ່ງເສີມການລົງທຶນ ຂັ້ນຕອນການພິຈາລະນາກິດຈະການສຳປະທານ ແມ່ນຂຶ້ນກັບປະເພດກິດຈະການທີ່ມີໃນບັນຊີຣຽກການລົງທຶນ ຫຼື ບໍ່ມີໃນບັນຊີດັ່ງກ່າວ ຜູ້ສະເຫນີຂໍສຳປະທານຕ້ອງມີຖານະເປັນນິຕິບຸກຄົນເທົ່ານັ້ນ.

ໃບທະບຽນສຳປະທານ ລວມເອົາການອະນຸຍາດລົງທຶນ, ນະໂຍບາຍສົ່ງເສີມ, ເລກລະຫັດວິສາຫະກິດ ແລະ ເລກປະຈຳຕົວຜູ້ເສຍອາກອນ.

ຜູ້ລົງທຶນມີຈຸດປະສົງລົງທຶນໃນກິດຈະການສຳປະທານຕ້ອງຍື່ນຄຳຮ້ອງຂໍສະເໜີຜ່ານການບໍລິການການລົງທຶນປະຕູດຽວຂອງກະຊວງການ ແລະ ການລົງທຶນເພື່ອຄົ້ນຄວ້າສະເໜີລັດຖະບານ ຫຼື ອົງການປົກຄອງທ້ອງຖິ່ນຂັ້ນແຂວງ ຫຼື ນະຄອນເພື່ອພິຈາລະນາອະນຸມັດການລົງທຶນນັ້ນ.

➢ **ການພິຈາລະນາອະນຸມັດ**

ການລົງທຶນໃນກິດຈະການສຳປະທານຕ້ອງໄດ້ຜ່ານຂັ້ນຕອນການຄັດເລືອກຕາມແຕ່ກໍລະນີ ດ້ວຍວິທີການ ຕ່າງໆ ເປັນຕົ້ນການປຽບທຽບ, ການປະມູນ ຫຼື ການປະເມີນຜົນໂດຍຂະແໜງແຜນການ ແລະ ການລົງທຶນບົນພື້ນ ຖານການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຕາມລະບຽບກົດໝາຍ.

ໃນການຄັດເລືອກເອົາຜູ້ລົງທຶນນັ້ນຕ້ອງຮັບປະກັນຄວາມໂປ່ງໃສ, ການເປີດເຜີຍ ແລະ ສາມາດກວດສອບໄດ້, ສຳລັບວິທີການຄັດເລືອກຈະມີການກຳນົດເອົາໄວ້ສະເພາະ.

ໃນການພິຈາລະນາການອະນຸມັດການລົງທຶນທີ່ຜ່ານການຄັດເລືອກແລ້ວຂະແໜງການແຜນການ ແລະ ການລົງທຶນພິຈາລະນາລົງທຶນພາຍໃນກິດຈະການສຳປະທານຕາມຂັ້ນຕອນດັ່ງນີ້:

1) ຄົ້ນຄວ້າ ແລະ ຕົກລົງທາງດ້ານຫຼັກການກ່ຽວກັບການລົງທຶນ.

2) ແນະ ນຳໃຫ້ຜູ້ລົງທຶນກະກຽມບັນດາເອກະສານຕາມແບບພິມທີ່ໄດ້ກຳນົດໄວ້ເປັນຕົ້ນບົດວິພາກເສດຖະ ກິດ-ເຕັກນິກ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ເອກະສານບັນຊີພາຫະນະ, ອຸປະກອນ ແລະ ວັດ ຖຸຮັບໃຊ້, ການຜະລິດໂດຍກົງທີ່ຈະນຳສະເໜີຂໍຍົກເວັ້ນພາສີ-ອາກອນນຳເຂົ້າ ເພື່ອເປັນພື້ນຖານໃຫ້ແກ່ ການຄົ້ນຄວ້າພິຈາລະນາອະນຸມັດ.

3) ຂະແໜງການແຜນການ ແລະ ການລົງທຶນ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງເປັນເຈົ້າການໃນການເຈລະຈາ ແລະ ຮ່າງສັນຍາເບື້ອງຕົ້ນ.

4) ນຳເອົາຜົນຂອງການເຈລະຈາຂອງໂຄງການດັ່ງກ່າວເຂົ້າພິຈາລະນາທີ່ກອງປະຊຸມທີ່ຫ້ອງການບໍລິການການລົງທຶນປະຕູດຽວເປັນຜູ້ຈັດຂຶ້ນ.

5) ນຳສະເໜີຕໍ່ລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງເພື່ອພິຈາລະນາຕົກລົງພ້ອມທັງແນະນຳໃຫ້ຜູ້ລົງທຶນວາງເງິນຄ້ຳປະກັນໂຄງການຕາມລະບຽບການໂດຍອີງຕາມປະເພດ ແລະ ຂະແໜງການລົງທຶນ, ສຳລັບເງິນຄ້ຳປະກັນດັ່ງກ່າວຕ້ອງຖອກເຂົ້າບັນຊີຄັງເງິນແຫ່ງຊາດ ແລະ ຈະຖືກສົ່ງຄືນໃຫ້ກັບຜູ້ລົງທຶນໃນເວລາທີ່ໂຄງການເລີ່ມຕົ້ນດຳ ເນີນໄລຍະໜຶ່ງ.

6) ເມື່ອຜູ້ລົງທຶນໄດ້ຮັບການຕົກລົງແລ້ວຂະແໜງການແຜນການ ແລະ ການລົງທຶນຈະອອກໃບທະບຽນສຳປະທານໃຫ້ແກ່ຜູ້ລົງທຶນຕາມລະບຽບການ.

➢ **ກຳນົດເວລາຂອງການລົງທຶນ**

ເດືອນພະຈິກ 2016, ສະພາແຫ່ງຊາດລາວ ໄດ້ອະນຸມັດກົດໝາຍ ສະບັບປັບປຸງໃໝ່ ວ່າດ້ວຍການສົ່ງເສີມ ການລົງທຶນ, ໄດ້ກຳນົດສັນຍາເຊົ່າ ສຳປະທານໄວ້ 50 ປີ ກົດໝາຍສະບັບນີ້ໄດ້ຖືກນຳໃຊ້ໃນເດືອນທັນວາ 2016ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບກ່ອນ, ທີ່ຖືກນຳໃຊ້ໃນ ປີ 2009 ນັ້ນ, ຜູ້ລົງທຶນໄດ້ຮັບການສຳປະທານທີ່ດິນ ເຖິງ 99 ປີ.

ໝາຍຄວາມວ່າ ການລົງທຶນໃນກິດຈະການສຳປະທານແມ່ນອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂຂອງກິດຈະການສຳປະທານຕາມລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງອາຍຸການຂອງການລົງທຶນຕາມກົດໝາຍສົ່ງ ເສີມການລົງທຶນປີ 2009 ແມ່ນສູງສຸດບໍ່ເກີນ 90 ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງເຫັນດີຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ, ແຕ່ກົດໝາຍສົ່ງເສີມການລົງທຶນປີ 2016 ເຫັນໄດ້ການໄດ້ປຽບເສຍປຽບລະຫວ່າງລັດຖະບານກັບຜູ້ລົງທຶນ ຫຼື ເພື່ອຮັບປະກັນໃນການຄຸ້ມຄອງຈຶ່ງໄດ້ດັດປັບ "ອາຍຸການລົງທຶນໃນກິດຈະການສຳປະທານ ແມ່ນອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ເຕັກນິກຂອງ

ກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງແຕ່ສູງສຸດບໍ່ໃຫ້ເກີນ 50 ປີ ແລະ ສາມາດຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ຫຼື ສະພາ ແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງຕາມຂອບເຂດສິດທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ”[2].

ໃນກໍລະນີທີ່ຜູ້ລົງທຶນໃນການປະຕິບັດໂຄງການທີ່ຈະນຳເອົາຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ, ໄດ້ປະ ຕິບັດສັນຍາຢ່າງມີປະສິດທິຜົນ ແລະ ມີຜົນງານໃນການປະກອບສ່ວນພັດທະນາ ກໍ່ຈະໄດ້ຮັບພິຈາລະນາຕໍ່ອາຍຸສຳປະທານນັ້ນໄດ້.

4. **ການລົງທຶນການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ** (Development activity in special and specific economic zones).

ເຊື່ອແນ່ວ່າ ເວລາໄດ້ຍິນຄຳວ່າ‘ເຂດເສດຖະກິດພິເສດ’ (Special Economic Zones) ຫຼາຍຄົນອາດຈະມີຄຳຖາມວ່າ ເອ໋ ! ເປັນຫຍັງຈຶ່ງເອີ້ນວ່າ ເຂດເສດຖະກິດພິເສດ ແລະ ມັນຕ່າງກັບເສດຖະກິດປະເພດອື່ນໆ ຄືແນວໃດນໍ**?**.

ຢູ່ປະເທດລາວ ໄດ້ມີດຳລັດວ່າດ້ວຍ ເຂດເສດຖະກິດພິເສດ (ສະບັບປັບປຸງ), ເລກທີ 188/ລບ ລົງວັນທີ 07 ມິຖຸນາ 2018 (ເຊິ່ງປັບປຸງຈາກ ສະບັບປີ 2010) ຊຶ່ງເປັນດຳລັດໃນການຈັດຕັ້ງຜັນຂະຫຍາຍກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນການລົງທຶນ ເພື່ອດຶງດູດການລົງທຶນ ດ້ວຍການວາງນະໂຍບາຍ ‘ສົ່ງເສີມພິເສດ’ ແກ່ນັກລົງທຶນ.

ໃນມາດຕາ 2 ຂອງດຳລັດ ໄດ້ກຳນົດໄວ້ວ່າ ‘ເຂດເສດຖະກິດພິເສດ (Special Economic Zone)’ ແມ່ນເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນ ທີ່ມີການນຳໃຊ້ເຕັກໂນໂລຊີສູງ, ນຳໃຊ້ວັດຕະກຳ ໃນການຜະລິດກະສິກຳເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາ ກອນທຳມະຊາດ ແລະ ພະລັງງານ ເພື່ອພັດທະນາແບບຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ. ເຂດເສດຖະກິດພິເສດ ອາດຈະປະກອບມີນິຄົມອຸດສາຫະກຳ, ເຂດພັດທະນາກະສິກຳ, ອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ, ການພັດ ທະນາເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການບໍລິການ, ການຄ້າ, ການທ່ອງທ່ຽວ. ເຊິ່ງສະແດງວ່າ ເຂດເສດຖະ ກິດພິເສດ ແມ່ນມີການດຳເນີນຈັດຕັ້ງປະຕິບັດພາຍໃຕ້ ‘ນະໂຍບາຍະພິເສດ’ ແລະ ນິຕິກຳສະເພາະໃນການເຄື່ອນໄຫວ.

ເຂດເສດຖະກິດພິເສດຂອງປະເທດລາວ ໄດ້ກາຍເປັນຍຸດທະສາດອັນສຳຄັນ ເພື່ອຂັບເຄື່ອນການຂະຫຍາຍໂຕທາງດ້ານເສດຖະກິດຂອງປະເທດ ເຊິ່ງເຫັນໄດ້ຊັດເຈນ ໃນການສ້າງນະໂຍບາຍ ແລະ ກົດໝາຍ ເພື່ອອຳນວຍຄວາມສະດວກຕໍ່ການພັດທະນາເຂດເສດຖະກິດພິເສດໃນປະເທດ ໂດຍສະເພາະ ໃນແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ, ການມີດຳລັດເພື່ອອຳນວຍຄວາມສະດວກໃນການສ້າງຕັ້ງ, ການມີນະໂຍບາຍການຍົກເວັ້ນພາສີ ແລະ ການມີແຜນຍຸດທະສາດການພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະໃນປະເທດ.

ສຳລັບການລົງທຶນໃນເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ Special Economic Zone(SEZ) ແມ່ນ ການກິດຈະການການລົງທຶນ ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ (ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ).

ລັດຖະບານເປັນຜູ້ກຳນົດ ແລະ ຮັບຮອງການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ (ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ) ແລະ ການສະເໜີຂໍລົງທຶນ ຕ້ອງນອນໃນເປົ້າໝາຍ. ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ປະກອບມີ: ເຂດອຸດສາຫະກຳ, ເຂດຜະລິດ ເພື່ອສົ່ງອອກ, ເຂດທ່ອງທ່ຽວ, ເຂດການຄ້າ/ເຂດການຄ້າຊາຍແດນ, ເຂດປອດພາສີ, ເຂດພັດທະນາ IT.

[2] ກົດໝາຍສົ່ງເສີມການລົງທຶນປີ 2016, ມາດຕາ 42

➢ **ການລົງທຶນໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ປະກອບດ້ວຍ 2 ຮູບການ ຄື:**

ການລົງທຶນທົ່ວໄປ: ຜູ້ພັດທະນາ ແລະ ຜູ້ລົງທຶນ ສາມາດລົງທຶນໃນທຸກຂະແໜງການ ພາຍໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ, ຍົກເວັ້ນກິດຈະການທີ່ລັດຖະບານເກືອດຫ້າມ ເປັນຕົ້ນການຊື້ຂາຍ ການຜະລິດອາວຸດເສິກ, ສິ່ງເສບຕິດ, ສານເຄມີທີ່ ເປັນພິດ, ກິດຈະການທີ່ພາໃຫ້ມີການທຳລາຍສິ່ງແວດລ້ອມ, ຊີວິດ ແລະ ຊັບສິນຂອງປະຊາຊົນ, ການບໍລິການທີ່ຂັດ ກັບລະບຽບກົດໝາຍ, ທຳລາຍຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ວັດທະນະທຳອັນດີງາມຂອງຊາດ ແລະ ຂອງທ້ອງຖິ່ນ ການລົງທຶນທົ່ວໄປຈະບໍ່ໄດ້ຮັບນະໂຍບາຍສົ່ງເສີມໃດໆ ຈາກ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ .

ການລົງທຶນທີ່ໄດ້ຮັບການສົ່ງເສີມ: ການລົງທຶນທີ່ໄດ້ຮັບການສົ່ງເສີມ ຕາມການກຳນົດຂອງຄະນະບໍລິຫານ ຫຼື ສະພາບໍລິຫານເສດຖະກິດ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເປັນຕົ້ນ ອຸດສາຫະກຳເອເລັກໂຕຼນິກ, ການຄົ້ນຄວ້າວິທະຍາສາດ ແລະ ເຕັກ ໂນໂລຊີໃໝ່ເຂົ້າໃນການຜະລິດ, ການຜະລິດອຸປະກອນກໍ່ສ້າງທັນສະໄໝ, ໂຄງລ່າງແຫລ່ງທ່ອງທ່ຽວ, ການຜະລິດ- ປຸງແຕ່ງກະສິກຳສະອາດ, ຜະລິດຕະພັນປອດສານພິດ, ການຜະລິດເພື່ອສົ່ງອອກ, ການປູກຕົ້ນໄມ້ໃຫ້ເປັນປ່າ, ໂຮງ ຮຽນ, ໂຮງໝໍ, ສວນສາທາລະນະ ແລະ ກິດຈະການລົງທຶນອື່ນໆ ຕາມທີ່ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເຫັນວ່າເໝາະສົມ ແລະ ມີທ່າແຮງ.

➢ **ການຂໍອະນຸຍາດລົງທຶນ**

ການຂໍອະນຸຍາດລົງທຶນໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນມີ **2** ລັກສະນະດັ່ງນີ້:

\+ **ຜູ້ພັດທະນາເຂດ**: ສາມາດຂໍອະນຸຍາດລົງທຶນກັບຫ້ອງການກອງເລຂາ, ຄະນະກຳມະ ການແຫ່ງຊາດລາວ ເພື່ອຄຸ້ມຄອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ "ຄຂພສ",ຊຶ່ງຕ້ອງປະກອບເອກະສານມີຄື:

ແຜນແມ່ບົດ (**Master Plan**) ສຳລັບຈຸດປະສົງພັດທະນາ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ , ບົດລາຍງານການວິເຄາະທາງດ້ານເສດຖະກິດ-ເຕັກນິກ, ບົດລາຍງານຜົນກະທົບສິ່ງແວດລ້ອມ, ຮ່າງຂອງຂໍ້ຕົກລົງສັນຍາ, ສະຖານະທາງດ້ານການເງິນ.

\+ **ຜູ້ລົງທຶນໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ :** ເປັນການລົງທຶນໃສ່ໃນ ເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ມີຢູ່ແລ້ວ, ຜູ້ລົງທຶນສາມາດຂໍອະນຸຍາດລົງທຶນກັບຜູ້ບໍລິຫານເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ຕົນຕ້ອງການເຂົ້າໄປລົງທຶນໃນເຂດນັ້ນໆໄດ້ເລີຍ ລາຍລະອຽດເບິ່ງຕື່ມໃນກົດໝາຍສົ່ງເສີມການລົງທຶນປີ 2016[3].

\+ **ກຳນົດເວລາໃນການລົງທຶນ**

ແນ່ນອນ ຂໍ້ມູນທີ່ໜ້າສົນໃຈອັນໜຶ່ງກ່ຽວກັບ ການພັດທະນາເຂດເສດຖະກິດພິເສດໃນປະເທດລາວ ກໍ່ຄືອາຍຸສຳປະທານທີ່ດິນ ໃນມາດຕາ 61 ຂອງ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນການລົງທຶນ (ສະບັບປັບປຸງປີ 2016) ໄດ້ລະບຸວ່າອາຍຸສຳປະທານທີ່ດິນ ເພື່ອພັດທະນາເສດຖະກິດພິເສດ ແມ່ນໄດ້ສູງສຸດ ບໍ່ເກີນ 50 ປີ ແຕ່ສາມາດຕໍ່ໄດ້ອີກຕາມການຕົກລົງຂອງສະພາແຫ່ງຊາດ ຕາມການສະເໜີ ຂອງລັດຖະບານ (ອາຍຸການສຳປະທານທີ່ດິນແມ່ນໄດ້ປ່ຽນຈາກ 99 ປີ ມາເປັນ 50 ປີ ຫຼັງຈາກມີການປັບປຸງ ກົດໝາຍການສົ່ງເສີມການລົງທຶນການລົງທຶນ ປີ 2009 ມາເປັນການສົ່ງເສີມການລົງທຶນການລົງທຶນ ສະບັບປັບປຸງ ປີ 2016 ).

---

[3] ກົດໝາຍສົ່ງເສີມການລົງທຶນປີ 2016, ພາກທີ IV

ສະນັ້ນ, ຈຶ່ງສະຫຼຸບໄດ້ວ່າ ການລົງທຶນໃນກິດຈະການພັດທະນາເຂດເສດຖະກິດສະເພາະແມ່ນອີງຕາມປະເພດ, ຂະໜາດ, ເງື່ອນໄຂແຕ່ ລະເຂດຂອງເຂດເສດຖະກິດສະເພາະ ຕາມກົດໝາຍສົ່ງເສີມການລົງທຶນປີ 2009 ແມ່ນສູງສຸດບໍ່ໃຫ້ເກີນ ເກົ້າສິບ ເກົ້າປີ(99ປີ) ແຕ່ກົດໝາຍສົ່ງເສີມການລົງທຶນປີ 2016 ກຳນົດບໍ່ໃຫ້ເກີນ 50 ປີ ແລະ ສາມາດຕໍ່ໄດ້ແລ້ວແຕ່ລະກໍ ລະນີຕາມການຕົກລົງຂອງລັດຖະບານເປັນຕົ້ນແມ່ນກໍລະນີທີ່ຜູ້ລົງທຶນໄດ້ປະຕິບັດໂຄງການທີ່ນຳເອົາຜົນປະໂຫຍດສູງສຸດໃຫ້ແກ່ປະເທດຊາດ, ໄດ້ປະຕິບັດສັນຍາຢ່າງມີປະສິດທິຜົນ ແລະ ມີຜົນງານໃນການປະກອບສ່ວນພັດທະນາ ທ້ອງຖິ່ນ.ສຳລັບການລົງທຶນຂອງຜູ້ລົງທຶນອື່ນ ໃນເຂດເສດຖະກິດສະເພາະ ແມ່ນບບໍ່ຈຳກັດອາຍຸການລົງທຶນເວັ້ນເສຍ ແຕ່ກິດຈະການລົງທຶນທີ່ໄດ້ກຳນົດອາຍຸການລົງທຶນເອົາໄວ້ໃນລະບຽບກົດໝາຍຂະແໜງການທີ່ກ່ຽວຂ້ອງ.

- **ໃສ່ໃຈກ່ຽວກັບ ການລົງທຶນເພື່ອພັດທະນາເຂດເສດຖະກິດສະເພາະ**

ເຂດເສດຖະກິດສະເພາະແມ່ນເຂດເສດຖະກິດ ຊຶ່ງລັດຖະບານອະນຸຍາດໃຫ້ລົງທຶນມາພັດທະນາສ້າງເປັນເຂດເສດຖະກິດພິເສດ, ເຂດການຜະລິດເພື່ອສົ່ງອອກ, ເຂດອຸດສາຫະກຳ, ເຂດຕົວເມືອງທ່ອງທ່ຽວ, ເຂດການຄ້າປອດພາສີ, ເຂດພັດທະນາເຕັກໂນໂລຊີດ້ານຂໍ້ມູນຂ່າວສານ, ເຂດເສດຖະກິດຊາຍແດນ ແລະ ອື່ນໆ.

ການລົງທຶນເພື່ອພັດທະນາເຂດເສດຖະກິດສະເພາະ ແມ່ນການລົງທຶນໃນຂົງເຂດດັ່ງກ່າວ ຂອງຜູ້ລົງທຶນພາຍໃນ ຫຼື ຜູ້ລົງທຶນຕ່າງປະເທດທີ່ມີຈຸດປະສົງຢາກລົງທຶນໃນຂົງເຂດດັ່ງກ່າວຂອງຜູ້ລົງທຶນພາຍໃນ ຫຼື ຜູ້ລົງທຶນຕ່າງປະເທດທີ່ມີຈຸດປະສົງຢາກລົງທຶນໃນຂົງເຂດດັ່ງກ່າວ.

**References:**


1. ກົດໝາຍສົ່ງເສີມການລົງທຶນປີ 2009;
2. ກົດໝາຍສົ່ງເສີມການລົງທຶນ 2016;
3. ຕຳລາຮຽນວິຊາກົດໝາຍສົ່ງເສີມການລົງທຶນ, ສະຖາບັນຍຸຕິທຳແຫ່ງຊາດ, ປີ 2021;
4. ດຳລັດວ່າດ້ວຍ ເຂດເສດຖະກິດພິເສດ (ສະບັບປັບປຸງ), ເລກທີ 188/ລບ ລົງວັນທີ 07 ມີຖຸນາ 2018.